ຜ-ຟຟລ ຈັດກອງປະຊຸມ

ຖອດຖອນບົດຮຽນ ດ້ານວິຊາການ



ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຈັດກອງປະຊຸມ ຖອດຖອນບົດຮຽນດ້ານການ ບໍລິຫານຈັດການ, ການຜະລິດ, ການບໍລິຫານ ຈັດການນ້ຳ ແລະ ການບຳລຸງຮັກສາ-ສ້ອມແປງ, ເປັນກອງປະຊຸມແລກປ່ຽນບົດຮຽນທາງດ້ານເຕັກ ນິກວິຊາການ ປະຈຳ 6 ເດືອນຕົ້ນປີ 2024 ເຊິ່ງຈັດ ຂຶ້ນໃນລະຫວ່າງວັນທີ 12-13/11/2024 ທີ່ຫ້ອງ ປະຊຸມສຳນັກງານໃຫຍ່ ລັດວິສາຫກິດໄຟຟ້າລາວ, ນະຄອນຫຼວງວຽງຈັນ. ລາຍລະອຽດມີດັ່ງລຸ່ມນີ້:

1. ກອງປະຊຸມໄດ້ ຖອດຖອນບົດຮຽນການບໍລິຫານຈັດການ, ການຜະລິດ, ການບໍລິຫານນ້ຳ ແລະ ການ ບຳລຸງຮັກສາສ້ອມແປງ ຂອງຝ່າຍຜະລິດ ປະຈຳປີ 2024.
2. ຮັບຟັງຄຳເຫັນຂອງຕາງໜ້າ ບັນດາຝ່າຍຕໍ່ກັບບັນຫາຕ່າງໆທີ່ຕິດພັນ ລະຫວ່າງ ຝ່າຍຜະລິດ, ເຂື່ອນ ໄຟຟ້າ ແລະ ບັນດາຝ່າຍຕ່າງໆ ແລກປ່ຽນບົດຮຽນ ທາງດ້ານເຕັກນິກຂອງ ທຸກເຂື່ອນໄຟຟ້າ ປະຈຳປີ 2024.
3. ກອງປະຊຸມ ໄດ້ມີພິທີ ມອບ-ຮັບ ໃບຢັ້ງຢືນ ການແຕ່ງຕັ້ງວິຊາການຊຳນານງານ ທີ່ຜ່ານການທົດສອບ ແລະ ໄດ້ຮັບໃບຢັ້ງຢືນ ຊຸດທີ 1 ຈຳນວນ 13 ທ່ານ ໂດຍການໃຫ້ກຽດເຂົ້າຮ່ວມພິທີຂອງ ທ່ານ ດາວ ວຽງ ສຸນັນທະລາດ ຮັກສາການຜູ້ອຳນວຍການໃຫຍ່ ຜ-ຟຟລ, ພ້ອມນັ້ນກໍ່ໄດ້ໃຫ້ການຊີ້ນຳ, ໂອລົມ ແລະ ກ່າວປິດກອງປະຊຸມ





